ຄຳກອນຈາກໃຈຂອງສິພັນດອນເຖິງອະດີດຜູ້ອຳນວຍການແລະອາຈານສອນທຸກໆທ່ານ.

ບັດນີ້ ຮຽມຊິຂໍກ່າວຕ້ານ ໃຫ້ໃຊ້ອ່ານເປັນກອນ
ເຖິງບັນດາອາຈານສອນ ຄູ່ຊູ່ຄົນເດີທ່ານ
ສ່ວນວ່າງານເຮົາໃກ້ ຍັງບໍ່ໃກໃຈຈິດຈໍ່
ຫວັງຈະລໍພົບທ່ານ ອາຈານເຈົ້າຄູ່ຊູ່ຄົນ ທ່ານເອີຍ

ແສນດີໃຈເລີດລົ້ນ ຈະພົບທ່ານອາຈານສອນ
ຂໍຈົ່ງສັນຈອນມາ ຈາກຖິ່ນໃກໄລບ້ານ
ຖ້າທ່ານມາປະສານໃຫ້ ງານເຮົາຈະມີຄ່າ
ນັກຮຽນຄຣູທຸກທົ່ວໜ້າ ຈະຄອຍທ້ານທ່ານທີ່ມາ

ຄຸນພໍ່ຫນັກເລີດລ້ຳ ເກີນກວ່າພູຜາ
ຄຸນແມ່ເຫມືອນມະພາສູງ ກວບຕະພີພາຍໃຕ້
ແຕ່ວ່າ ຄຸນຄຣູເປັນຄົນໃຫ້ ວິຊາສູງແສນສະຫຼາດ
ຄວາມສາມາດເກັ່ງກ້າ ວິຊາໄດ້ຈາກຄຣູ ທ່ານເອີຍ

ວັນເດືອນປີຜ່ານພົ້ນ ເວລາລວ່ງກາຍຫນີ
ສາມສິບປີນັບແສນນານ ອາຍຸການກໍຜັນປີ້ນ
ຄຣູບາງຄົນໄດ້ສູນສິ້ນ ກາຍເປັນດິນໄຮ້ຮ່າງ
ຊີວາວາງຂາດສຽ້ງ ໄດ້ສູນມວ້ຍມອດຊີວັນ ທ່ານເອີຍ

ພວກເຮົາບຸນເລີດລ້ຳ ທີ່ຍັງຢູ່ເມືອງມະນຸດ
ຈຸດທີ່ເຮົາຫມາຍເຖິງ ຢາກພົບກັນໃນວັນນັ້ນ
ແສນລຳພັນທາງຂ້ອຍ ສາວໃຈພອຍຢາກເຫັນທ່ານ
ຄຣູອາຈານທຸກທົ່ວໜ້າ ຈົ່ງເດີນດັ້ນດຸ່ງມາ ແດ່ທ້ອນ

ພະຄຸນຂອງທ່ານກ້າ          ມີຄ່າແລະສູງສັກ
ຫນັກກວ່າຫີນສີລາແຂງ          ຊັ່ງຊາບໍ່ມີໄດ້
ສິ່ງໃດດີຄຣູສອນໃຫ້          ແນວໃດຊາມໃຫ້ປະປ່ອຍ
ຂ້ານ້ອຍຈາຣຶກໄວ້          ພະຄຸນແກວ້ຊິບໍ່ລືມ     ດອກນາ

ພິເສດ  ຂໍສິ່ງພອນໃຫ້ທ່ານ          ອາຈານອວດອຸຣາຈິດ
ສິດທຸກຄົນຍັງຄິດ          ເປັນຫ່ວງຫຼາຍຢາກເຫັນຫນ້າ
ຂໍໃຫ້ຈິດໃຈກ້າ          ເຫມືອນມະນີອັນມີຄ່າ
ອາຍຸ  ວັນນະ  ສຸຂຂະ  ພະລະ  ຂໍໃຫ້ໃສສອ່ງຟ້າ  ທຽມເທົ້າຫນ່ວຍພະຈັນ  ທ່ານເອີຍ

ສິດທຸກຄົນໃນມື້ນັ້ນ          ຫວັງພົບທ່ານອາຈານສອນ
ສີພັນດອນເປັນຄົນວອນ          ກ່າວກອນບົດນີ້
ດວງຮີດີຢາກເຫັນຫນ້າ          ຂໍຄະມາອີກຄັ້ງນຶ່ງ
ເຖິງວ່າ  ຊີວິດນາງຊິຂາດຊິ້ນ          ຈົມມວ້ນບໍ່ຄະນຶງ    ທ່ານເອີຍ

ໂດຍ:   ສາວຫຼັກເຈັດ